ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 2753/ກງ.

ນະຄອນຫລວງວຽງຈັນ, ລົງວັນທີ 16 AUG 2017

## ແຈ້ງການເພີ່ມເຕີມ

ເຖິງ : - ກົມສ່ວຍສາອາກອນ, ກະຊວງການເງິນ;

- ບັນດາສ່ວຍສາອາກອນປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ;
- ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ບັນດາຫົວໜ່ວຍທຸລະກິດທີ່ດຳເນີນທຸລະກິດດ້ານບໍ່ແຮ່.

ເລື່ອງ : ການເກັບອາກອນມູນຄ່າເພີ່ມ ຈາກການຂຸດຄົ້ນ, ຈຳໜ່າຍ ແລະ ສົ່ງອອກຜະລິດຕະພັນແຮ່ທາດ.

- ອີງຕາມ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 52/ສພຊ, ລົງວັນທີ 23 ກໍລະກົດ 2014;
- ອີງຕາມ ຄຳແນະນຳ ຂອງລັດຖະມົນຕີກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 0077/ກງ, ລົງວັນທີ 11 ມັງກອນ 2017.

ເພື່ອຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ແລະ ສາມາດເກັບລາຍຮັບເຂົ້າງົບປະມານໄດ້ຢ່າງຖືກຕ້ອງຄົບຖ້ວນ, ກະຊວງການເງິນ ອອກແຈ້ງການເພີ່ມເຕີມ ກ່ຽວກັບການເກັບອາກອນມູນຄ່າເພີ່ມ ຈາກການຂຸດຄົ້ນ, ຈຳໜ່າຍພາຍໃນປະເທດ ແລະ ສົ່ງອອກຕ່າງປະເທດ ຫຼື ເຂດເສດຖະກິດພິເສດ ສຳລັບແຮ່ທາດ, ຜະລິດຕະພັນແຮ່ທາດສຳເລັດຮູບ ແລະ ເຄິ່ງສຳເລັດຮູບ ມີລາຍລະອຽດດັ່ງນີ້:

### 1. ການປະຕິບັດອາກອນມູນຄ່າເພີ່ມຂອດຂຸດຄົ້ນແຮ່ທາດ

ຖ້າຜູ້ສຳປະທານຂຸດຄົ້ນເອງແມ່ນບໍ່ໄດ້ຖືກເສຍ, ຖ້າຈ້າງຜູ້ອື່ນຂຸດຄົ້ນແມ່ນຕ້ອງເສຍອາກອນມູນຄ່າເພີ່ມ ຈາກການຊື້ບໍລິການ ຂຸດຄົ້ນດັ່ງກ່າວ ອັດຕາ 10%, ຕາມຂໍ້ 6. 2. ນ ຂອງຄຳແນະນຳ ຂອງລັດຖະມົນຕີກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 0077/ກງ. ລົງວັນທີ 11 ມັງກອນ 2017: ການສະໜອງການບໍລິການຂຸດຄົ້ນຊັບພະຍາກອນທຳມະຊາດ ໂດຍຜູ້ອື່ນທີ່ບໍ່ແມ່ນຜູ້ສຳປະທານ, ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມແມ່ນມູນຄ່າບໍລິການຂຸດຄົ້ນຕົວຈິງ ຫຼື ຕາມສັນຍາທີ່ຍັງບໍ່ທັນໄດ້ລວມອາກອນມູນຄ່າເພີ່ມ.

### 2. ການເກັບອາກອນມູນຄ່າເພີ່ມຈາກການຈຳໜ່າຍ ຜະລິດຕະພັນແຮ່ທາດ ພາຍໃນປະເທດ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ສະໜອງແຮ່ທາດ ຫລື ຜະລິດຕະພັນແຮ່ທາດບໍ່ວ່າຈະເປັນຜະລິດຕະພັນສຳເລັດຮູບ, ເຄິ່ງສຳເລັດຮູບ ຫລື ເປັນວັດຖຸດິບກໍ່ຕາມ ຕ້ອງໄດ້ຄິດໄລ່ເກັບອາກອນມູນຄ່າເພີ່ມໃນອັດຕາ 10% ຂອງມູນຄ່າສະໜອງ, ຕາມທີ່ກຳນົດໃນມາດຕາ 16 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ແລະ ຂໍ້ 6.4 ຄຳແນະນຳຂອງລັດຖະມົນຕີກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 0077/ກງ. ລົງວັນທີ 11 ມັງກອນ 2017. ຍົກເວັ້ນບັນດາລາຍການທີ່ໄດ້ກຳນົດຢູ່ໃນຕາມມາດຕາ 12 (ປັບປຸງ) ແລະ ຂໍ້ 5.1 ຂອງກົດໝາຍ ແລະ ຄຳແນະນຳດັ່ງກ່າວນັ້ນ.

3. ການເກັບອາກອນມູນຄ່າເພີ່ມຈາກການສົ່ງອອກແຮ່ທາດ ຫລື ຜະລິດຕະພັນແຮ່ທາດ ໄປຕ່າງປະເທດ ຫຼື ເຂດເສດຖະກິດພິເສດ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ສົ່ງອອກແຮ່ທາດ ຫລື ຜະລິດຕະພັນແຮ່ທາດໄປຕ່າງປະເທດ ຫຼື ເຂດເສດຖະກິດພິເສດ ຕ້ອງໄດ້ປະຕິບັດພັນທະອາກອນມູນຄ່າເພີ່ມ ດັ່ງນີ້:

- ໃຫ້ຄິດໄລ່ເກັບ ອມພ ອັດຕາ 0% ສໍາລັບສົ່ງອອກຜະລິດຕະພັນແຮ່ທາດສໍາເລັດຮູບ;
- ໃຫ້ຄິດໄລ່ເກັບ ອມພ ອັດຕາ 10% ສໍາລັບແຮ່ທາດທີ່ເປັນວັດຖຸດິບ ແລະ ບໍ່ແມ່ນຜະລິດຕະພັນສໍາເລັດຮູບຕາມທີ່ໄດ້ກໍານົດໄວ້ໃນມາດຕາ 16 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 52/ສພຊ, ລົງວັນທີ 23 ກໍລະກົດ 2014 ແລະ ຂໍ້ 6.4 ຂອງຄໍາແນະນໍາລັດຖະມົນຕີກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 0077/ກງ. ລົງວັນທີ 11 ມັງກອນ 2017.

4. **ການຫັກ, ການສົ່ງຄືນ ແລະ ການມອບອາກອນມູນຄ່າເພີ່ມ.**

(1) . **ການຫັກອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າ:**

ອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າທີ່ອະນຸຍາດໃຫ້ຫັກໄດ້ ແມ່ນອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າທີ່ຕິດພັນໂດຍກົງກັບແຮ່ທາດ ຫລື ຜະລິດຕະພັນແຮ່ທາດ ທີ່ຂາຍຢູ່ພາຍໃນປະເທດ ແລະ ປະຕິບັດຖືກຕ້ອງ, ຄົບຖ້ວນຕາມເງື່ອນໄຂຂອງມາດຕາ 19 ແລະ 20 ຂໍ້ 1 – 4 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 52/ສພຊ, ລົງວັນທີ 23 ກໍລະກົດ 2014 ແລະ ຄໍາແນະນໍາຂອງລັດຖະມົນຕີກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 0077/ກງ. ລົງວັນທີ 11 ມັງກອນ 2017.

ອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າທີ່ບໍ່ອະນຸຍາດໃຫ້ຫັກ ແມ່ນອາກອນມູນຄ່າເພີ່ມຂອງແຮ່ທາດ ຫລື ຜະລິດຕະພັນແຮ່ທາດທີ່ບໍ່ແມ່ນຜະລິດຕະພັນສໍາເລັດຮູບ ທີ່ສົ່ງອອກໄປຕ່າງປະເທດ ໂດຍໃຫ້ລົງເປັນລາຍຈ່າຍຂອງທຸລະກິດ.

(2) . **ການສົ່ງຄືນອາກອນມູນຄ່າເພີ່ມ:**

ອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າທີ່ອະນຸຍາດສົ່ງຄືນ ແມ່ນອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າທີ່ຕິດພັນໂດຍກົງກັບຜະລິດຕະພັນແຮ່ທາດສໍາເລັດຮູບ ທີ່ສົ່ງອອກໄປຕ່າງປະເທດ ຫຼື ເຂດເສດຖະກິດພິເສດ ແລະ ປະຕິບັດຖືກຕ້ອງ, ຄົບຖ້ວນຕາມເງື່ອນໄຂ ຕາມມາດຕາ 26 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ເລກທີ 52/ສພຊ, ລົງວັນທີ 23 ກໍລະກົດ 2014 ແລະ ຂໍ້ 7.1 ຂໍ້ 7.1 ຂໍ້ 1.(ກ) ຕາມຄໍາແນະນໍາ ຂອງລັດຖະມົນຕີກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 0077/ກງ. ລົງວັນທີ 11 ມັງກອນ 2017.

(3) . **ກົນໄກ ການແຈ້ງ - ມອບ ອາກອນມູນຄ່າເພີ່ມ:**

- ການສົ່ງອອກແຮ່ທາດ ຫລື ຜະລິດຕະພັນແຮ່ທາດທີ່ບໍ່ສໍາເລັດຮູບໄປຕ່າງປະເທດ ຫຼື ເຂດເສດຖະກິດພິເສດ ແມ່ນໃຫ້ແຈ້ງ-ມອບຢູ່ກົມສ່ວຍສາອາກອນ ສະເພາະໂຄງການທີ່ສູນກາງອອກອະນຸມັດ ແລະ ສໍາລັບໂຄງການທີ່ຂັ້ນແຂວງ ຫຼື ທ້ອງຖິ່ນອະນຸມັດແມ່ນໃຫ້ແຈ້ງ-ມອບຢູ່ພະແນກສ່ວຍສາອາກອນແຂວງບ່ອນໂຄງການຕັ້ງຢູ່;
- ສໍາລັບການຈໍາໜ່າຍແຮ່ທາດ ຫລື ຜະລິດຕະພັນແຮ່ທາດຢູ່ພາຍໃນປະເທດແມ່ນໃຫ້ປະຕິບັດການແຈ້ງ-ມອບອາກອນມູນຄ່າເພີ່ມນໍາຂະແໜງສ່ວຍສາອາກອນບ່ອນທີ່ບໍລິສັດຂຶ້ນທະບຽນ ຫຼື ບ່ອນໂຄງການຕັ້ງຢູ່.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຮອງນາຍົກລັດຖະມົນຕີ**
**ລັດຖະມົນຕີກະຊວງການເງິນ**

ສົມດີ ດວງດີ